**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

ເລກທີ 29 /ຖວທ

ນະຄອນຫຼວງວຽງຈັນ, ວັນທີ 26 ມິຖຸນາ 2024

# ຄຳແນະນຳ

## ການຈັດຕັ້ງປະຕິບັດກ່ຽວກັບນະໂຍບາຍວີຊາ ແລະ ໄລຍະການພັກເຊົາ ຢູ່ ສປປ ລາວ ສຳລັບນັກທ່ອງທ່ຽວກຸ່ມເປົ້າໝາຍ ໃນໄລຍະປີທ່ອງທ່ຽວລາວ 2024.

- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສະບັບເລກທີ 678/ນຍ, 21 ທັນວາ 2021.
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ກ່ຽວກັບທິດຊີ້ນຳການຄົ້ນຄ້ວານະໂຍບາຍວີຊາ ( VISA ) ແລະ ການພັກເຊົາ ຢູ່ ສປປ ລາວ ສຳລັບນັກທ່ອງທ່ຽວກຸ່ມເປົ້າໝາຍ ໃນໄລຍະປີທ່ອງທ່ຽວລາວ 2024 ສະບັບເລກທີ 85/ຫສນຍ, ລົງວັນທີ 06 ພຶດສະພາ 2024.
- ອີງຕາມ ໜັງສືແຈ້ງການຂອງຫ້ອງການກະຊວງການຕ່າງປະເທດ ກ່ຽວກັບການຈັດຕັ້ງປະຕິບັດກ່ຽວກັບນະໂຍບາຍວີຊາ ແລະ ການພັກເຊົາ ຢູ່ ສປປ ລາວ ສຳລັບນັກທ່ອງທ່ຽວກຸ່ມເປົ້າໝາຍ ໃນໄລຍະປີທ່ອງທ່ຽວລາວ 2024 ສະບັບເລກທີ 704/ຫກ.ກສ.4, ລົງວັນທີ 22 ພຶດສະພາ 2024.
- ອີງຕາມ ບົດບັນທຶກກອງປະຊຸມປຶກສາຫາລືກ່ຽວກັບ ການຄົ້ນຄ້ວານະໂຍບາຍວີຊາ ແລະ ການພັກເຊົາຢູ່ ສປປ ລາວ ສຳລັບນັກທ່ອງທ່ຽວ ກຸ່ມເປົ້າໝາຍ ໃນໄລຍະປີທ່ອງທ່ຽວລາວ 2024 ຄັ້ງວັນທີ 30/05/2024.

ນັບແຕ່ປີ 2022 ເປັນຕົ້ນມາລັດຖະບານໄດ້ມີນະໂຍບາຍເປີດກວ້າງການທ່ອງທ່ຽວ ເຫັນວ່າມີນັກທ່ອງທ່ຽວຕ່າງປະເທດເຂົ້າມາທ່ຽວ ໃນ ສປປ ລາວ ຫຼາຍຂຶ້ນ ໂດຍສະເພາະແມ່ນນັກທ່ອງທ່ຽວ ຈາກ ສປ ຈີນ ສະນັ້ນ ເພື່ອເປັນການດຶງດູດນັກທ່ອງທ່ຽວ ລັດຖະບານຈຶ່ງໄດ້ເປີດກ້ວາງ ແລະ ຄົ້ນຄ້ວາສິ່ງອຳນວຍຄວາມສະດວກໃຫ້ກັບນັກທ່ອງທ່ຽວກຸ່ມເປົ້າໝາຍ ທີ່ໄດ້ເດີນທາງ ເຂົ້າ-ອອກ ສປປ ລາວ ໃຫ້ສະດວກຫຼາຍຂຶ້ນ. ເພື່ອເປັນການຈັດຕັ້ງຜັນຂະຫຍາຍ ແລະ ປະຕິບັດແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 704/ຫກ.ກສ.4, ລົງວັນທີ 22 ພຶດສະພາ 2024ວ່າດ້ວຍທິດຊີ້ນຳກ່ຽວກັບການຄົ້ນຄວ້ານະໂຍບາຍວີຊາ (VISA) ແລະ ການພັກເຊົາຢູ່ ສປປ ລາວ ສຳລັບນັກທ່ອງທ່ຽວກຸ່ມເປົ້າໝາຍໃນໄລຍະປີທ່ອງທ່ຽວລາວ 2024. ດັ່ງນັ້ນ, ລັດຖະມົນຕີ ກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຈຶ່ງໄດ້ອອກຄຳແນະນຳໃນການຈັດຕັ້ງປະຕິບັດເຊິ່ງມີລາຍລະອຽດ ດັ່ງລຸ່ມນີ້:

I. ນະໂຍບາຍວີຊາ, ເພີ່ມໄລຍະຂອງການພັກເຊົາ ແລະ ຂະຫຍາຍຂອບເຂດການເດີນທາງຂອງຜູ້ໃຊ້ປຶ້ມ/ໃບຜ່ານແດນ.

1. ສຳລັບນັກທ່ອງທ່ຽວທຸກໆປະເທດທີ່ຈະເຂົ້າມາ ສປປ ລາວ ເປັນກຸ່ມຜ່ານການບໍລິການຂອງບໍລິສັດນຳທ່ຽວ ທີ່ຢູ່ ສປປ ລາວ ທີ່ໄດ້ລົງທະບຽນ ຖືກຕ້ອງຕາມລະບຽບຫຼັກການໂດຍຮັບຮອງຈາກກະຊວງ ຖວທ. ບໍລິສັດນຳທ່ຽວຕ້ອງເຮັດລາຍຊື່ຄັດຕິດໃບສະເໜີເຖິງກົມຕຳຫຼວດກວດຄົນເຂົ້າ-ອອກເມືອງ ເພື່ອອຳນວຍຄວາມສະດວກໃຫ້ແກ່ນັກທ່ອງທ່ຽວໃນການເດີນທາງເຂົ້າ-ອອກ ຢ່າງສະດວກຄ່ອງຕົວ;
2. ສຳລັບນັກທ່ອງທ່ຽວຈີນ ລວມທັງຜູ້ທີ່ຖືໜັງສືຜ່ານແດນຮົງກົງ, ມາເກົາ ແລະ ໄຕ້ຫວັນ ທີ່ມາທ່ອງທ່ຽວເປັນກຸ່ມໃນນາມບໍລິສັດນຳທ່ຽວ ເຫັນດີໃຫ້ຈັດຕັ້ງປະຕິບັດການຍົກເວັ້ນວີຊາ ແບບບໍ່ຕິດວີຊາສະຕິກເກີໃສ່ໜັງສືຜ່ານແດນ (ທຳມະດາ) ໃນໄລຍະພັກເຊົາ 15 ວັນ, ແຕ່ຕ້ອງໃຫ້ຜ່ານການບໍລິການຂອງບໍລິສັດນຳທ່ຽວ ທີ່ຢູ່ ສປປ ລາວ ແລະໄດ້ລົງທະບຽນ ຮັບຮອງຈາກ ກະຊວງ ຖວທ ແລະ ເຫັນດີໃຫ້ມີການພັກເຊົາ ຢູ່ ສປປ ລາວ ເປັນເວລາ 15 ວັນ; ສະເພາະນັກທ່ອງທ່ຽວຈີນເປັນກຸ່ມທີ່ຖືໜັງສືຜ່ານແດນໄຕ້ຫວັນ ແມ່ນໃຫ້ອອກວີຊາປົວຄືເກົ່າຕາມລະບຽບການແຕ່ບໍ່ຕິດວີຊາສະຕິກເກີ;
3. ສຳລັບນັກທ່ອງທ່ຽວທີ່ນຳໃຊ້ໜັງສືຜ່ານແດນ ຈາກປະເທດ ອົດສະຕຣາລີ, ນິວຊີແລນ, ອາເມລິກາ ແລະ ການາດາ, ໂອຕຼິດ, ແບນຊິກ, ເດັນມາກ, ແຟງລັງ, ຝຣັ່ງ, ເຢຍລະມັນ, ເກຣັກ, ໄອແລນ, ອິຕາລີ, ໂຮນລັງ, ນອກແວ, ໂປແລນ, ປອກຕຸຍການ, ຣັດເຊຍ, ແອດສະປາຍ, ຊູແອັດ, ສະວິດສະແລນ ແລະ ອັງກິດ ສາມາດສະເໜີຂໍວີຊາເຂົ້າ-ອອກ ຫຼາຍຄັ້ງ ຢູ່ສະຖານທູດ ຫຼື ສະຖານກົງສຸນ ແຫ່ງ ສປປ ລາວ ປະຈຳ ຢູ່ຕ່າງປະເທດ ໂດຍການເຫັນດີອະນຸມັດຈາກກົມກົງສຸນ ກະຊວງການຕ່າງປະເທດ. ໃນກໍລະນີຂໍວີຊາກັບດ່ານຫຼື ວີຊາອອນໄລ (E-VISA) ແມ່ນຈະໄດ້ຮັບວີຊາເຂົ້າ ສປປ ລາວ ໄດ້ພຽງ 1 ຄັ້ງ ຕາມລະບຽບການ ແລະ ໃຫ້ເພີ່ມກຳນົດໄລຍະເວລາພັກເຊົາ ຈາກ 30 ວັນ ເປັນ 60 ວັນ;
4. ສຳລັບນັກທ່ອງທ່ຽວຂອງ 08 ປະເທດ ຄື: ເດັນມາກ, ນອກແວ, ແຟງລັງ, ຊູແອດ, ໂອຕຼິດ, ແບນຊິກ, ແອດສະປາຍ ແລະ ເກຣັກ ທີ່ມີຈຸດປະສົງເດີນທາງເຂົ້າມາທ່ຽວ ສປປ ລາວ ແມ່ນໃຫ້ຍົກເວັ້ນວີຊາເຂົ້າ 01 ຄັ້ງ ແບບບໍ່ຕິດວີຊາສະຕິກເກີໃສ່ໜັງສືຜ່ານແດນ ແລະ ສາມາດພັກເຊົາ ຢູ່ ສປປ ລາວ ໄດ້ 15 ວັນ;
5. ສຳລັບນັກທ່ອງທ່ຽວມາຈາກປະເທດໄທ ທີ່ນຳໃຊ້ປຶ້ມຜ່ານແດນ (Border Pass) ແລະ ໃບຜ່ານແດນຊົ່ວຄາວ (Temporary Border pass) ແມ່ນເຫັນດີໃຫ້ເພີ່ມໄລຍະເວລາພັກເຊົາຈາກ 3 ວັນເປັນ 10 ວັນ ແລະ ສາມາດເດີນທາງໄປຕໍ່ໄດ້ອີກ 3 ແຂວງຕິດຈອດກັນ ແລະ ກັບຄືນໄປອອກດ່ານເກົ່າທີ່ເດີນທາງເຂົ້າມາ ແຕ່ຕ້ອງຜ່ານການບໍລິການຂອງບໍລິສັດນຳທ່ຽວ ທີ່ໄດ້ລົງທະບຽນ ຮັບຮອງຈາກ ກະຊວງ ຖວທ;
6. ສຳລັບນັກທ່ອງທ່ຽວມາຈາກປະເທດ ສສ ຫວຽດນາມ ທີ່ນຳໃຊ້ປຶ້ມຜ່ານແດນ (Border Pass) ແລະ ໃບຜ່ານແດນຊົ່ວຄາວ(Temporary Border pass) ແມ່ນປະຕິບັດຕາມກອບສັນຍາສອງຝ່າຍທີ່ມີຢູ່ແລ້ວ (15ວັນ), ສາມາດເດີນທາງໄປຕໍ່ໄດ້ອີກ 3 ແຂວງຕິດຈອດກັນ ແລະ ກັບຄືນໄປອອກດ່ານເກົ່າທີ່ເດີນທາງເຂົ້າມາ ແຕ່ຕ້ອງຜ່ານການບໍລິການຂອງບໍລິສັດນຳທ່ຽວ ທີ່ໄດ້ລົງທະບຽນຮັບຮອງຈາກກະຊວງ ຖວທ;

7. ສໍາລັບນັກທ່ອງທ່ຽວມາຈາກ ສປ ຈີນ ທີ່ນໍາໃຊ້ປື້ມຜ່ານແດນ(Border Pass) ແມ່ນເຫັນດີປະຕິບັດຕາມສັນຍາສອງຝ່າຍ ເຊິ່ງໄດ້ປະຕິບັດກໍານົດໃຫ້ 10 ວັນ, ສາມາດຕໍ່ພັກເຊົາໄດ້ ແລະ ສາມາດເດີນທາງຜ່ານເສັ້ນທາງລົດໄຟລາວ-ຈີນ ແຕ່ແຂວງຫຼວງນໍ້າທາ ຮອດນະຄອນຫຼວງວຽງຈັນ (ສາມາດທ່ອງທ່ຽວໄດ້ໃນແຂວງ ອຸດົມໄຊ, ຫຼວງພະບາງ, ແຂວງວຽງຈັນ, ນະຄອນຫຼວງວຽງຈັນ) ແລະ ກັບຄືນໄປອອກດ່ານເກົ່າທີ່ເດີນທາງເຂົ້າມາ ສປປ ລາວ ແຕ່ຕ້ອງຜ່ານການບໍລິການຂອງບໍລິສັດນໍາທ່ຽວທີ່ໄດ້ລົງທະບຽນຮັບຮອງຈາກ ກະຊວງ ຖວທ;
8. ນັກທ່ອງທ່ຽວທີ່ເດີນທາງມາດ້ວຍຕົນເອງແບບປົກກະຕິທົ່ວໄປແມ່ນອະນຸຍາດໃຫ້ໄປຕາມຂອບເຂດທີ່ໄດ້ກໍານົດໄວ້ໃນສັນຍາລະຫວ່າງປະເທດ (ສັນຍາສອງຝ່າຍ) ຕາມທີ່ເຄີຍໄດ້ປະຕິບັດຜ່ານມາ.

## II. ການຈັດຕັ້ງປະຕິບັດ

1. ມອບໃຫ້ບັນດາກົມ ໃນຂະແໜງການທ່ອງທ່ຽວ, ພະແນກຖະແຫຼງຂ່າວ, ວັດທະນາທໍາ ແລະ ທ່ອງທ່ຽວ ແຂວງ/ນະຄອນຫຼວງ ເອົາໃຈໃສ່ໃນການປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອຕິດຕາມກວດກາ ແລະ ຊຸກຍູ້ ໃຫ້ບັນດາຫົວໜ່ວຍທຸລະກິດ ໃນຂະແໜງການທ່ອງທ່ຽວ ທີ່ມີຈຸດປະສົງໃນການນໍາເຂົ້ານັກທ່ອງທ່ຽວຕ່າງປະເທດ ຈາກບັນດາປະເທດທີ່ລັດຖະບານໄດ້ມີນະໂຍບາຍວີຊາ (VISA) ໃຫ້ມີການເຄື່ອນໄຫວຢ່າງຖືກຕ້ອງຕາມຂັ້ນຕອນ, ລະບຽບກົດໝາຍທີ່ກ່ຽວຂ້ອງວາງອອກ ແລະ ປະຕິບັດມາດຕະການຢ່າງເຂັ້ມງວດ, ພ້ອມທັງໂຄສະນາເຜີຍແຜ່ລະບຽບການ ແລະ ນະໂຍບາຍດັ່ງກ່າວ ໃຫ້ຮັບຮູ້ຢ່າງທົ່ວເຖິງທັງພາຍໃນ ແລະ ຕ່າງປະເທດ;
2. ມອບໃຫ້ກົມແຜນການ ແລະ ການຮ່ວມມືສາກົນ, ກົມຄຸ້ມຄອງທຸລະກິດການທ່ອງທ່ຽວປະສານສົມທົບກັບພາກສ່ວນກ່ຽວຂ້ອງຂອງ ສປ ຈີນ ເພື່ອປ້ອງກັນ ແລະ ແກ້ໄຂບັນຫາທົວສູນຫຼຽນ ໂດຍການກໍານົດລາຍຊື່ບໍລິສັດນໍາທ່ຽວຢູ່ ສປປ ລາວ ທີ່ເຮັດການຕະຫຼາດຈີນ ຫຼື ນໍາເຂົ້ານັກທ່ອງທ່ຽວຈີນ ເພື່ອສົ່ງໃຫ້ລັດຖະບານຈີນ ຫຼື ສະຖານທູດຈີນ, ສະຖານກົງສູນຈີນ ປະຈໍາ ສປ ລາວ ແລະ ສະຖານທູດລາວ, ສະຖານກົງສູນລາວ ປະຈໍາ ສປ ຈີນ ພ້ອມທັງຂໍລາຍຊື່ບໍລິສັດນໍາທ່ຽວ ຢູ່ ສປ ຈີນ ທີ່ດໍາເນີນທຸລະກິດນໍາທ່ຽວ ທີ່ຈະນໍານັກທ່ອງທ່ຽວຈີນເຂົ້າມາ ສປປ ລາວ ເພື່ອແຈ້ງມາຍັງກະຊວງການຕ່າງປະເທດໂດຍໄວ;
3. ມອບໃຫ້ກົມຄຸ້ມຄອງທຸລະກິດການທ່ອງທ່ຽວ ປະສານສົມທົບກັບບັນດາສະມາຄົມທຸລະກິດການທ່ອງທ່ຽວໃນການຄັດເລືອກເອົາຫົວໜ່ວຍທຸລະກິດນໍາທ່ຽວທີ່ມີການຕະຫຼາດຈີນ ເພື່ອສະເໜີການນໍາຂອງກະຊວງ ຖວທ ຮັບຮອງ ພ້ອມທັງລົງຕິດຕາມກວດກາຫົວໜ່ວຍທຸລະກິດທ່ອງທ່ຽວຂອງຈີນ ທີ່ດໍາເນີນທຸລະກິດ ຢູ່ ສປປ ລາວ ຢ່າງເປັນປົກກະຕິ ແລະ ຊຸກຍູ້ໃຫ້ທຸລະກິດດັ່ງກ່າວໄດ້ເອົາໃຈໃສ່ດໍາເນີນການຢ່າງຖືກຕ້ອງຖ້າມີການກະທໍາຜິດແມ່ນໃຫ້ປະຕິບັດມາດຕະການ ແລະ ປັບໄໝ ຕາມລະບຽບກົດໝາຍກ່ຽວຂ້ອງຢ່າງເຂັ້ມງວດ;
4. ມອບໃຫ້ກົມກົງສູນກະຊວງການຕ່າງປະເທດ ແລະ ກົມຕໍາຫຼວດກວດຄົນເຂົ້າ-ອອກເມືອງ ກະຊວງ ປ້ອງກັນຄວາມສະຫງົບ ເຮັດໜັງສືແຈ້ງການເປັນລາຍລັກອັກສອນ ເພື່ອແຈ້ງໄປຍັງສາຍຕັ້ງຂອງຕົນ ໃນການຈັດຕັ້ງປະຕິບັດ ໃຫ້ໄປຕາມທິດຊີ້ນໍາຂອງລັດຖະບານ;
5. ມອບໃຫ້ກົມໂຄສະນາການທ່ອງທ່ຽວ, ກົມສື່ມວນຊົນ ກະຊວງ ຖວທ ໃນການເຜີຍແຜ່ນະໂຍບາຍວີຊາ ແລະ ການພັກເຊົາ ຢູ່ ສປປ ລາວ ໃຫ້ແກ່ບັນດາທຸລະກິດນໍາທ່ຽວ ທັງພາຍໃນ ແລະ ຕ່າງປະເທດ ໄດ້ຮັບຊາບໂດຍໄວ

ພ້ອມທັງປະສານສົມທົບກັບບັນດາສະຖານທູດ, ສະຖານກົງສຸນ ເພື່ອໂຄສະນາເຜີຍແຜ່ ໂດຍຜ່ານຫຼາຍຊ່ອງທາງ ໃຫ້ເຂົ້າເຖິງກຸ່ມເປົ້າໝາຍທາງອອນລາຍ ແລະ ອອັບລາຍ;

6. ໃຫ້ປະຕິບັດຂັ້ນຕອນການແຈ້ງລາຍຊື່ນັກທ່ອງທ່ຽວທີ່ຜ່ານການບໍລິການຂອງບໍລິສັດນຳທ່ຽວຂອງລາວ ແລະ ຄູ່ສັນຍາຂອງບໍລິສັດນຳທ່ຽວຂອງ ສປ ຈີນ ກ່ອນການນຳເຂົ້ານັກທ່ອງທ່ຽວຕາມນະໂຍບາຍການຍົກເວັ້ນວີຊາ ແລະ ໄລຍະຂອງການພັກເຊົາ;
7. ສຳລັບວັນ, ເວລາ ໃນການຈັດຕັ້ງປະຕິບັດ ແລະ ວັນ, ເວລາສິ້ນສຸດການຈັດຕັ້ງປະຕິບັດ ແມ່ນເລີ່ມແຕ່ວັນທີ 01 ກໍລະກົດ 2024 ຫາ ວັນທີ 31 ທັນວາ 2024;
8. ເພື່ອເປັນການສົ່ງເສີມການທ່ອງທ່ຽວ ແລະ ບໍ່ສ້າງຄວາມກົດດັນໃຫ້ນັກທ່ອງທ່ຽວຈຶ່ງໃຫ້ຍົກເລີກການຕິດຕາມຂອງເຈົ້າໜ້າທີ່ຕຳຫຼວດທ່ອງທ່ຽວ ໄປນຳຂະບວນລົດນຳທ່ຽວ ເພື່ອຫຼຸດຜ່ອນຄ່າໃຊ້ຈ່າຍຂອງບໍລິສັດນຳທ່ຽວ.

ດັ່ງນັ້ນ, ຈຶ່ງໄດ້ອອກຄຳແນະນຳສະບັບນີ້ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

ລັດຖະມົນຕີ

ສວນສະຫວັນ ວິຍະເກດ